# ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ກໍລະນີສຶກສາບ້ານຄອນ, ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ

**ສຸກສະຫວັນ ສີພາພົມມະຈັນ[1], ແສງສຸລິຍາ ຈັນທະນາຄອນ[2], ອຸດຕະຄອນ ສິງທອງ[3], ທະນູສິນ ພະໄຊສິດທິເດດ[4]**

*ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ສປປ ລາວ*

**ບົດຄັດຫຍໍ້**

ການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ກໍລະນີສຶກສາບ້ານຄອນ, ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ ເພື່ອສຶກສາລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ ແລະ ສຶກສາຄວາມສຳພັນ ລະຫວ່າງ ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມ ຕໍ່ກັບລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ, ດອນເດດ ເມືອງໂຂງ ແຂວງຈຳປາສັກ. ໂດຍໃຊ້ກຸ່ມຕົວຢ່າງທັງໝົດ 216 ຕົວຢ່າງຈາກບ້ານຄອນ 108 ຄອບຄົວ ແລະ ບ້ານດອນເດດ 108 ຄອບຄົວ. ວິເຄາະໂດຍໃຊ້ຄ່າຄວາມຖີ່ (Frequency), ເປີເຊັນ (Percentage) ແລະ ຄ່າສະເລ່ຍ (Mean), ຄ່າຜັນປ່ຽນມາດຕະຖານ (Standard Deviation: SD). ທົດສອບປັດໄຈສ່ວນບຸກຄົນຕໍ່ກັບການມີສ່ວນຮ່ວມໃນການປະຕິບັດ ດ້ວຍ Chi-Square Tests.

ຜົນການສຶກສາພົບວ່າ: ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍ ເທົ່າກັບ 3.16 ແລະ ມີຄ່າ SD=0.83, ຖ້າພິຈາລະນາໃນແຕ່ລະດ້ານເຫັນວ່າ ສ່ວນຮ່ວມໃນການຮັບຜົນປະໂຫຍດ ມີຄ່າສະເລ່ຍຫຼາຍກວ່າໝູ່ ເທົ່າກັບ 3.65 ແລະ ຄ່າ SD=0.75 ຊຶ່ງຈະເຫັນໄດ້ຈາກຈານວນນັກທ່ອງທ່ຽວທີ່ເດີນທາງໄປທ່ຽວຊົມຕາດສົມພະມິດ ແລະ ບັນດາສະຖານທີ່ທ່ອງທ່ຽວຢູ່ບ້ານຄອນ ແລະ ບ້ານດອນເດດມີຈຳນວນເພີ່ມຂຶ້ນເຮັດໃຫ້ປະຊາຊົນໄດ້ມີລາຍໄດ້ຈາກການບໍລິການນັກທ່ອງທ່ຽວ ບໍ່ວ່າ ຈະເປັນບ້ານພັກ, ໂຮງແຮມ, ຮ້ານອາຫານ, ທ່າເຮືອ, ລົດຮັບສົ່ງ ແລະ ອື່ນໆ, ຮອງລົງມາແມ່ນ ດ້ານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ມີຄ່າສະເລ່ຍເທົ່າກັບ 3.63 ແລະ ຄ່າ SD=0.94 ໃນດ້ານນີ້ແມ່ນຍັງບໍ່ທັນໄດ້ດີ ຊຶ່ງປະຊາຊົນຍັງລໍຖ້າແຕ່ການຈັດຕັ້ງປະຕິບັດຈາກພາກລັດ, ການມີສ່ວນຮ່ວມໃນການຕັດສິນໃຈ ມີຄ່າສະເລ່ຍ ເທົ່າກັບ 3.59 ແລະ ຄ່າ SD=0.86 ດ້ານນີ້ແມ່ນຍັງມີນ້ອຍ ຊຶ່ງປະຊາຊົນຍັງ ບໍ່ທັນໄດ້ກ້າທີ່ຈະຕັດສິນໃຈໃນການເຂົ້າຮ່ວມກິດຈະກຳຕ່າງໆ ຂອງບ້ານໃນການພັດທະນາແຫຼ່ງທ່ອງທ່ຽວ, ດ້ານການມີສ່ວນຮ່ວມໃນການຕິດຕາມ ແລະ ປະເມີນຜົນ ມີຄ່າສະເລ່ຍເທົ່າກັບ 3.56 ແລະ ຄ່າ SD=0.78 ສາລັບດ້ານນີ້ແມ່ນມີນ້ອຍທີ່ສຸດ ເນື່ອງຈາກວ່າເຫັນໄດ້ຈາກການມີສ່ວນຮ່ວມໃນການຮັກສາສິ່ງແວດລ້ອມ ແມ່ນຍັງບໍ່ທັນໄດ້ດີ ຊຶ່ງປະຊາຊົນສ່ວນໃຫຍ່ແມ່ນ ລະບາຍນ້ຳເສຍລົງໃນແມ່ນ້ຳຂອງເຮັດໃຫ້ນ້ຳຂອງຖືກປົນເປື້ອນ ເປັນມົນລະພິດຕໍ່ສິ່ງແວດລ້ອມທັງຄົນ ແລະ ສັດ.

---

[1] *ສຸກສະຫວັນ ສີພາພົມມະຈັນ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ:* Souksppc@gmail.com

[2] *ແສງສຸລິຍາ ຈັນທະນາຄອນ, ຫ້ອງການຄົ້ນຄວ້າວິທະຍາສາດ ແລະ ບໍລິການວິຊາການ, ມະຫາວິທະຍາໄລຈຳປາສັກ, ອີເມລ:* ctnksengsouliya@gmail.com

[3] *ອຸດຕະຄອນ ສິງທອງ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ:* oudtakonest@cu.edu.la

[4] *ທະນູສິນ ພະໄຊສິດທິເດດ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ, ອີເມວ:* hl_jaja@hotmail.com

ຜົນການວິເຄາະຈາກການທົດສອບຄ່າ Chi-Square Tests ແມ່ນມີຜົນແຕ່ຜົນການທົດສອບປັດໄຈດ້ານໄລຍະເວລາທີ່ອາໄສຢູ່ໃນບ້ານ ຕໍ່ກັບການມີສ່ວນຮ່ວມໃນການປະຕິບັດ ພົບວ່າມີຄວາມສໍາພັນກັນທີ່ລະດັບຄວາມສໍາຄັນທາງສະຖິຕິ 0.05 ເຊິ່ງມີຄ່າທົດສອບ sig=0.044, ສະແດງວ່າ ໄລຍະເວລາທີ່ອາໄສ ຢູ່ໃນບ້ານຂອງຜູ້ຕອບແບບສອບຖາມແມ່ນສິ່ງຜົນຕໍ່ການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດພັດທະນາແຫຼ່ງທ່ອງທ່ຽວບ້ານຄອນດອນເດດໃຫ້ຍືນຍົງ.

**ຄໍາສັບສໍາຄັນ:** ການມີສ່ວນຮ່ວມ, ການພັດທະນາແຫຼ່ງທ່ຽວແບບຍືນຍົງ

# LOCAL VILLAGER'S PARTICIPATION IN THE DEVELOPMENT OF SUSTAINABLE TOURISM A CASE STUDY OF KHON AND DON DET VILLAGE KHONG DISTRICT CHAMPASAK PROVINCE

**Souksavanh SIPHAPHOMMACHANH[1], Sengsouliya CHANTHANAKHONE [2], Oudtakone SINGTHONG[3], Thanousinh PHAXAISITHIDET[4]**

*Faculty of Economics and management, Champasack University, Lao PDR*

## ABSTRACT

Local Villager's participation in development of sustainable tourism: a case study of Khon and Don Det villages, Khong District, Champasak Province, to study the level of people's participation in the development of sustainable tourism in Khon and Don Det villages, Khong District, Champasak Province, and to study the relationship between the general information of the respondents and the level of public participation in the development of sustainable tourism, using a questionnaire with a total sample size of 2 1 6 households at Khone village 108 and Don Det village 108 households to conduct interviews face-to-face. Analyze using percentage and standard deviation (SD). Test individual factors for participation in practice with chi-square tests.

The results of the study found the level of people's participation in the development of sustainable tourism in Khon Village and Don Det Village, Khong District, Champasak Province. In many levels, the average value is equal to 3.61 and the SD value is 0.83. If we consider each aspect, it can be seen that the joint garden in benefiting has more average value than friends equal to 3.65 and SD value = 0.75, which can be seen from the number of tourists who travel to visit Tat Somphamit, and the number of tourist attractions in Khon and Don Det village has increased so that people can earn from tourist services, whether they are guesthouses, hotels, restaurants, piers, shuttle buses. and others, followed by participation in the implementation of the average value equal to 3.63 and value SD=0.94 in this aspect is not good and the people are still waiting for the implementation from the government, the participation in decision-making has an average value of 3.59 and SD=0.86. This aspect is still small, and the people have not yet dared to participate in the

---

[1]Faculty of Economics and Management, Email: Souksppc@gmail.com
[2]*Sciencetific and Academic Office, CU, Email: ctnksengsouliya@gmail.com*
[3]Faculty of Economics and Management, Email: oudtakonest@cu.edu.la
[4]Faculty of Economics and Management, Email: hl_jaja@hotmail.com

activities of the village in the development of tourism sites. The water is contaminated and pollutes the environment for both people and animals.

The analysis results from the Chi-Square Tests are effective, but the test results of the factor of the length of time living in the village to participate in the implementation found that there is a relationship at the statistical significance level of 0.05 with a test value of sig=0.044, showing that the length of time living in the village of the respondents has an effect on their participation in the implementation of the sustainable development

**Keywords:** participation, development of sustainable tourism

## 1. ພາກສະເໜີ

ການທ່ອງທ່ຽວຖືເປັນຂະແໜງການໜຶ່ງທີ່ມີການຂະຫຍາຍຕົວຢ່າງໄວວາ ແລະ ກວ້າງຂວາງຢູ່ບັນດາປະເທດໃນໂລກໃນຍຸກປະຈຸບັນຫຼາຍປະເທດໄດ້ເອົາໃຈໃສ່ຕໍ່ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດຍ້ອນວ່າການທ່ອງ ທ່ຽວໄດ້ນຳເອົາເງິນຕາຕ່າງປະເທດເຂົ້າມາໃນປະເທດ ຊຶ່ງເປັນການຊຸກຍູ້ການລົງທຶນທາງທຸລະກິດທີ່ກ່ຽວຂ້ອງໂດຍທາງກົງ ແລະ ທາງອ້ອມເຊັ່ນ: ທຸລະກິດການນຳທ່ຽວ, ທຸລະກິດບໍລິການພັກແຮມ, ທຸລະກິດບໍລິການອາຫານ, ການຂົນ ສົ່ງ, ການຂາຍເຄື່ອງທີ່ລະນຶກ ແລະ ອື່ນໆ ພ້ອມກັນນັ້ນກໍ່ເປັນການຊຸກຍູ້ການລົງທຶນສ້າງພື້ນຖານໂຄງລ່າງເຊັ່ນ: ເສັ້ນ ທາງ, ສະໜາມບິນ, ທ່າເຮືອໂດຍສານ, ລະບົບໂທລະຄົມ ມະນາຄົມ, ໄຟຟ້າ, ນ້ຳປະປາ ແລະ ອື່ນໆ ທັງເປັນການສ້າງວຽກເຮັດງານທຳໃຫ້ແກ່ປະຊາຊົນໃນຂະແໜງບໍລິການ, ການຜະລິດສິ່ງອອກກັບທີ່ ແລະ ພາໃຫ້ມີການສະສົມເງິນຕາ, ມີການໝູນວຽນພາຍໃນປະເທດເປັນຢ່າງດີ ແລະ ການກະຈາຍລາຍໄດ້ໄປສູ່ທ້ອງຖິ່ນ, ຊົນນະບົດຫ່າງໄກສອກຫຼີກ.

ແຂວງຈຳປາສັກເປັນແຂວງໜຶ່ງທີ່ມີທ່າແຮງດ້ານອຸດສາຫະກຳການທ່ອງທ່ຽວໂດຍອີງໃສ່ທີ່ຕັ້ງທາງດ້ານພູມສາດ, ມູນເຊື້ອ ແລະ ຮີດຄອງປະເພນີທີ່ເປັນເອກະລັກຂອງຊາດ ຄືຂອງທ້ອງຖິ່ນເຊິ່ງເໝາະສົມແກ່ການທ່ອງທ່ຽວທາງທຳມະຊາດ, ປະ ຫວັດສາດ, ແລະ ວັດທະນະທຳ, ເມືອງໂຂງກໍ່ເປັນເມືອງໜຶ່ງ ທີ່ນອນໃນແຂວງຈຳປາສັກທີ່ມີທ່າ ແຮງ ແລະ ຈຸດພິເສດທີ່ໂດດເດັ່ນທາງດ້ານການທ່ອງທ່ຽວມີແມ່ນ້ຳຂອງອ້ອມຮອບເກາະດອນ ຈົນໄດ້ຂະໜານນາມວ່າ: ມະຫານາທີສີພັນດອນ, ນ້ຳຕົກຕາດຄອນພະເພັງ, ນ້ຳຕົກ ຕາດສົມພະມິດ ແລະ ແຫຼ່ງທ່ອງທ່ຽວທາງດ້ານປະຫວັດ ສາດ ແລະ ວັດທະນະທຳອີກຫຼາກຫຼາຍ ອັນເປັນທີ່ສ້າງ ຄວາມສົນໃຈໃຫ້ນັກທ່ຽວທັງພາຍໃນ ແລະ ຕ່າງປະເທດເຂົ້າມາທ່ຽວຊົມເປັນຈຳນວນຫຼາຍໃນແຕ່ລະປີ (ແຜນພັດ ທະນາເສດຖະກິດ-ສັງຄົມ 5 ປີຄັ້ງທີ 9 ແຂວງຈາປາສັກ, 2022).

ຈາກສະພາບການທ່ອງທ່ຽວຂອງເມືອງໂຂງທີ່ກ່າວມາຂ້າງຕົ້ນ ແລະ ລັດຖະບານໄດ້ເນັ້ນໃສ່ການທ່ອງທ່ຽວ ແບບຍືນຍົງສ້າງຜົນປະໂຫຍດໃຫ້ຊຸມຊົນ, ສ້າງທັກສະຄວາມສາມາດດ້ານທຸລະກິດ, ເປີດຊ່ອງທາງໃຫ້ຊຸມຊົນໄດ້ຮັບຜົນປະໂຫຍດໂດຍເນັ້ນການອະນຸລັກ, ສິ່ງແວດລ້ອມ ແລະ ວັດທະນະທຳຈຶ່ງເປັນທີ່ໜ້າສົນໃຈວ່າ ພື້ນທີ່ທີ່ມີການປ່ຽນແປງດ້ານການທ່ອງທ່ຽວ ຄວາມເປັນຈິງແລ້ວປະຊາ ຊົນໃນທ້ອງຖິ່ນມີສະພາບເສດຖະກິດເປັນຢ່າງໃດ ແລະ ມີແນວທາງນະໂຍບາຍໃນການສົ່ງເສີມເສດຖະກິດການທ່ອງ ທ່ຽວໃຫ້ກັບປະຊາຊົນໃນທ້ອງຖິ່ນທີ່ເປັນອີງປະກອບ ສຳຄັນໃນການດຳລົງຊີວິດຢູ່ໃນຊຸມຊົນເຊິ່ງຂໍ້ມູນທີ່ໄດ້ສາມາດນຳໄປໃຊ້ໃນການວາງແຜນສົ່ງເສີມການທ່ອງທ່ຽວ ເພື່ອໃຫ້ປະຊາຊົນໄດ້ຮັບຜົນປະໂຫຍດຈາກການທ່ອງທ່ຽວໂດຍສະເພາະດ້ານເສດຖະກິດທີ່ດີຍິ່ງຂຶ້ນ.

## 2. ຈຸດປະສົງ

2.1. ເພື່ອສຶກສາການ ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ.

2.2. ສຶກສາຄວາມສຳພັນ ລະຫວ່າງ ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມຕໍ່ກັບລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ.

## 3. ວິທີການຄົ້ນຄວ້າ

ການສຶກສາໃນຫົວຂໍ້ ການມີສ່ວນຮ່ວມຂອງປະຊາ ຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ, ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ ເປັນການສຶກສາແບບສຳຫຼວດ (Survey – Research) ໂດຍມີວິທີການດຳເນີນການສຶກສາ

ໃນລັກສະນະຂອງການສຶກສາ ປະສົມປະສານລະຫວ່າງການຄົ້ນຄວ້າທາງດ້ານປະລິມານ (Quantitative Research) ແລະ ການຄົ້ນຄວ້າທາງດ້ານຄຸນນະພາບ (Qualitative Research) ດັ່ງນັ້ນຜູ້ສຶກສາໄດ້ກຳນົດການສຶກສາການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ ແລະ ບ້ານດອນເດດ ໄວ້ເປັນລະບົບຕາມຂັ້ນຕອນດັ່ງນີ້:

- ປະຊາກອນ (Population( ທີ່ນຳມາສຶກສາຄົ້ນ ຄວ້າໃນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ຄັດເລືອກເອົາບ້ານເປົ້າໝາຍໂດຍເລັງໃສ່ກຸ່ມບ້ານທີ່ມີການຂະຫຍາຍຕົວສູງທາງດ້ານການທ່ອງທ່ຽວເປັນບ້ານທີ່ມີສ່ວນຮ່ວມໃນການພັດທະນາການທ່ອງທ່ຽວ ກໍຄື: ບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ ເຊິ່ງລວມມີປະຊາກອນທັງໝົດ ຈຳນວນ 470 ຄົນ (ຫ້ອງການພາຍໃນເມືອງໂຂງ, 2022).

- ກຸ່ມຕົວຢ່າງ (Sample Size) ໃນການສຶກສາຄັ້ງນີ້ໄດ້ຄື: ຜູ້ປະກອບການທຸລະກິດທ່ອງທ່ຽວ ແລະ ປະຊາຊົນທົ່ວໄປທີ່ດຳລົງຊີວິດ ຢູ່ບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ. ໂດຍຈາກຂໍ້ມູນສະຖິຕິຈຳນວນຄອບຄົວຂອງ ບ້ານຄອນ ແລະ ບ້ານດອນເດດມີທັງໝົດ 470 ຄອບຄົວ (ຫ້ອງການພາຍໃນເມືອງໂຂງ, 2022) ໃນການສຶກສາຄົ້ນຄວ້າຄັ້ງນີ້ ແມ່ນການກຳນົດກຸ່ມຕົວຢ່າງ ຕາມສູດຂອງ ທາໂຣ ຢາມາເນ (Yamane. T. Statistic ,1973 ,(ລາຍລະອຽດດັ່ງລຸ່ມນີ້:

$$n=\frac{N}{1+Ne^2}$$

ເຊິ່ງ: N = ຈຳນວນປະຊາກອນ (470 ຄອບຄົວ)

e = ຄວາມຄາດເຄື່ອນທີ່ຍອມຮັບໄດ້ (0.05)

n = ຂະໜາດຂອງກຸ່ມຕົວຢ່າງ

ເມື່ອແທນຄ່າໃສ່ສູດຈະໄດ້ດັ່ງນີ້:

ແທນຄ່າໃສ່ສູດ $n = \frac{470}{1+470(0.05^2)}$

$$n = \frac{470}{2.175}$$

n = 216 ຄອບຄົວ

ເພື່ອໃຫ້ໄດ້ສັດສ່ວນທີ່ເໝາະສົມ ຜູ້ສຶກສາຈິ່ງກຳນົດເອົາຈຳນວນກຸ່ມຕົວຢ່າງຂອງ 2 ບ້ານເທົ່າກັນ ຄື: ບ້ານຄອນ ຈຳນວນ 108 ຄອບຄົວ ແລະ ບ້ານດອນເດດ ຈຳນວນ 108 ຄອບຄົວ.

- ໃນການປະມວນຜົນຂໍ້ມູນ ແລະ ໃຊ້ສະຖິຕິວິເຄາະຂໍ້ມູນໃນການວິໄຈ ປະກອບດ້ວຍ:

1.) ການວິເຄາະຂໍ້ມູນດ້ວຍສະຖິຕິເຊີງພັນລະນາ (Descriptive satistics) ດັ່ງນີ້:

+ ນາຂໍ້ມູນແບບສອບຖາມຕອນທີ 1 ກ່ຽວກັບຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມມາວິເຄາະໂດຍໃຊ້ຄ່າຄວາມຖີ່ (Frequency), ຄ່າສ່ວນຮ້ອຍ (Percentage).

+ ນາຂໍ້ມູນທີ່ໄດ້ຈາກແບບສອບຖາມທີ 2 ກ່ຽວກັບຂໍ້ມູນດ້ານການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວ ບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ ມາວິເຄາະໂດຍໃຊ້ຄ່າສະເລ່ຍ (Mean) ແລະ ຄ່າຜັນປ່ຽນມາດຕະຖານ (Standard Deviation: SD).

2.) ການວິເຄາະຂໍ້ມູນເຊີງອະນຸມານ (Inferential Satistics) ເພື່ອທົດສອບສົມມຸດຖານການວິໄຈດັ່ງນີ້:

- ທົດສອບຄວາມສາພັນ ລະຫວ່າງ ຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມຕໍ່ກັບລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ, ດອນເດດ ເມືອງໂຂງ ແຂວງຈຳປາສັກດ້ວຍ Chi-Square Tests.

## 4. ຜົນໄດ້ຮັບ

1.) ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ

ຕາຕະລາງ 1: ສະແດງເຖິງລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ.

| ລຳດັບ | ການມີສ່ວນຮ່ວມ | ຄ່າສະເລ່ຍ | ຄ່າ SD | ລະດັບການມີສ່ວນຮ່ວມ |
|---|---|---|---|---|
| 1 | ສ່ວນຮ່ວມໃນການຕັດສິນໃຈ | 3.59 | 0.86 | ຫລາຍ |
| 2 | ສ່ວນຮ່ວມໃນການຈັດຕັ້ງປະຕິບັດ | 3.63 | 0.94 | ຫລາຍ |
| 3 | ສວນຮ່ວມໃນການຮັບຜົນປະໂຫຍດ | 3.65 | 0.75 | ຫລາຍ |
| 4 | ສ່ວນຮ່ວມໃນການຕິດ ຕາມ ແລະ ປະເມີນຜົນ | 3.56 | 0.78 | ຫລາຍ |
| ລວມ | | 3.61 | 0.83 | ຫລາຍ |

**ແຫຼ່ງຂໍ້ມູນ: ຜົນການວິເຄາະຂໍ້ມູນຄັ້ງວັນທີ 20-24/11/2023**

ຜົນການສຶກສາພົບວ່າ: ລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ. ຢູ່ໃນລະດັບຫຼາຍ ມີຄ່າສະເລ່ຍເທົ່າກັບ 3.61 ແລະ ມີຄ່າ SD=0.83, ຖ້າພິຈາລະນາໃນແຕ່ລະດ້ານເຫັນວ່າສ່ວນຮ່ວມໃນການຮັບຜົນປະໂຫຍດ ມີຄ່າສະເລ່ຍຫຼາຍກ່ວາໝູ່ ເທົ່າກັບ 3.65 ແລະ ຄ່າ SD=0.75, ຮອງລົງມາແມ່ນດ້ານການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ມີຄ່າສະເລ່ຍເທົ່າກັບ 3.63 ແລະ ຄ່າ SD=0.94, ການມີສ່ວນຮ່ວມໃນການຕັດສິນໃຈ ມີຄ່າສະເລ່ຍ ເທົ່າກັບ 3.59 ແລະ ຄ່າ SD=0.86, ດ້ານການມີສ່ວນຮ່ວມໃນການຕິດຕາມ ແລະ ປະເມີນຜົນ ມີຄ່າສະເລ່ຍເທົ່າກັບ 3.56 ແລະ ຄ່າ SD=0.78.

2.) ຄວາມສຳພັນລະຫວ່າງຂໍ້ມູນທົ່ວໄປຂອງຜູ້ຕອບແບບສອບຖາມຕໍ່ກັບລະດັບການມີສ່ວນຮ່ວມຂອງປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນຍົງ ບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ.

ຕາຕະລາງ 2: ທົດສອບປັດໄຈດ້ານໄລຍະເວລາທີ່ອາໄສຢູ່ບ້ານຄອນ ແລະ ບ້ານດອນເດດ ຕໍ່ກັບການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ດ້ວຍ Chi-Square Tests

| | Value | df | Asymptotic Significance (2-sided) |
|---|---|---|---|
| Pearson Chi-Square | 17.323[a] | 9 | 0.044 |
| Likelihood Ratio | 15.095 | 9 | 0.088 |
| Linear-by-Linear Association | 0.000 | 1 | 0.986 |
| N of Valid Cases | 216 | | |

**ແຫຼ່ງຂໍ້ມູນ: ຜົນການວິເຄາະຂໍ້ມູນຄັ້ງວັນທີ 20-24/11/2023**

ຜົນການທົດສອບປັດໄຈດ້ານໄລຍະເວລາທີ່ອາໄສຢູ່ໃນບ້ານຕໍ່ກັບການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດ ພົບວ່າມີຄວາມສຳພັນກັນທີ່ລະດັບຄວາມສຳຄັນທາງສະຖິຕິ 0.05 ເຊິ່ງມີຄ່າທົດສອບ sig=0.044ສະແດງວ່າໄລຍະເວ , ລາທີ່ອາໄສຢູ່ໃນບ້ານຂອງຜູ້ຕອບແບບສອບຖາມແມ່ນສິ່ງຜົນຕໍ່ການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດຮ່ວມກັນ.

## 5. ວິພາກຜົນ

ຈາກການສຶກສາການມີ ສ່ວນຮ່ວມຂອງ ປະຊາຊົນໃນການພັດທະນາການທ່ອງທ່ຽວແບບຍືນ ຍົງຢູ່ ບ້ານຄອນດອນເດດເຫັນວ່າ: ລະດັບການມີ ສ່ວນຮ່ວມຂອງປະຊາຊົນໃນການພັດທະນາ ການທ່ອງທ່ຽວແບບຍືນຍົງ ບ້ານຄອນ ແລະ ບ້ານ ດອນເດດ ເມືອງໂຂງ ແຂວງຈຳປາສັກ ຢູ່ໃນລະ ດັບ ຫລາຍ ເນື່ອງຈາກວ່າປະຊາຊົນຈະໄດ້ຮັບປະໂຫຍດ ຈາກແຫລ່ງທ່ອງທ່ຽວ ຊຶ່ງຈະເຫັນໄດ້ຈາກຈຳນວນ ນັກທ່ອງທ່ຽວ ທີ່ເດີນທາງໄປທ່ຽວຊົມຕາດສົມພະ ມິດ ແລະ ບັນດາສະ ຖານທີ່ທ່ອງທ່ຽວ ຢູ່ບ້ານຄອນ ແລະ ບ້ານດອນເດດມີຈຳ ນວນເພີ່ມຂຶ້ນເຮັດໃຫ້ ປະຊາຊົນໄດ້ມີລາຍໄດ້ຈາກການບໍລິການນັກທ່ອງ ທ່ຽວ ບໍ່ວ່າ ຈະເປັນບ້ານພັກ, ໂຮງແຮມ,ຮ້ານ ອາຫານ, ທ່າເຮືອ, ລົດຮັບສົ່ງ ແລະ ອື່ນໆ, ແຕ່ ວ່າການມີສ່ວນຮ່ວມໃນການຮັກສາສິ່ງແວດລ້ອມ ແມ່ນຍັງບໍ່ທັນໄດ້ດີ ຊຶ່ງປະຊາຊົນສ່ວນໃຫຍ່ແມ່ນ ລະບາຍນ້ຳເສຍລົງ ໃນແມ່ນ້ຳຂອງ ເຮັດໃຫ້ນ້ຳຂອງ ຖືກປົນເປື້ອນ ເປັນມົນລະພິດຕໍ່ສິ່ງແວດລ້ອມທັງ ຄົນ ແລະ ສັດ.

ຜົນການທົດສອບຄ່າ Chi-Square Tests ແມ່ນມີຜົນແຕ່ຜົນການທົດສອບປັດໄຈດ້ານໄລຍະ ເວລາທີ່ອາໄສຢູ່ໃນບ້ານ, ຕໍ່ກັບການມີສ່ວນຮ່ວມໃນ ການປະຕິບັດ ພົບວ່າມີຄວາມສຳພັນກັນ ທີ່ລະດັບ ຄວາມສຳຄັນທາງສະຖິຕິ 0.05 ເຊິ່ງມີຄ່າທົດສອບ sig=0.044, ສະແດງວ່າ ໄລຍະເວລາທີ່ອາໄສຢູ່ໃນ ບ້ານຂອງຜູ້ຕອບແບບສອບຖາມແມ່ນສິ່ງຜົນຕໍ່ການ ມີສ່ວນຮ່ວມໃນ ການປະຕິບັດ.

## 6. ສະຫຼຸບຜົນ

ສ່ວນຮ່ວມຂອງປະຊາຊົນໃນການພັດທະນາ ການ ທ່ອງທ່ຽວແບບຍືນຍົງຢູ່ບ້ານຄອນ ແລະ ບ້ານ ດອນເດດ ເຫັນວ່າລະດັບການມີສ່ວນຮ່ວມຂອງ ປະຊາຊົນໃນການພັດ ທະນາການທ່ອງທ່ຽວ ແບບ ຍືນຍົງບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ ໂດຍລວມແມ່ນດີຫລາຍດ້ານເຊັ່ນ: ດ້ານການຮັບຜົນປະໂຫຍດ, ດ້ານການຕັດສິນໃຈ, ດ້ານການຈັດຕັ້ງປະຕິບັດ ແລະ ດ້ານການປະເມີນ ຜົນ ຊຶ່ງປະຊາຊົນໄດ້ເອົາໃຈໃສ່ປັບປຸງພື້ນຖານໂຄງ ລ່າງ, ສິ່ງອຳນວຍຄວາມສະດວກໃຫ້ດີຂຶ້ນ ສາມາດດຶງດູດນັກ ທອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດເຂົ້າມາທ່ຽວຊົມເພີ່ມຂຶ້ນໃນແຕ່ລະປີ.

## 7. ຄວາມຮູ້ບຸນຄຸນ (ຖ້າມີ)

ຂ້າພະເຈົ້າ ທ້າວ ສຸກສະຫວັນ ສີພາ ພົມມະຈັນ ເປັນນັກສຶກສາ ປະລິນຍາໂທ ເສດຖະສາດ ສາຂາການພັດທະນາຊຸມຊົນແບບຍືນ ຍົງ, ຄະນະເສດຖະສາດ ແລະ ການຄຸ້ມຄອງ, ມະຫາວິທະຍາໄລ ຈຳປາສັກ ມີຄວາມພູມໃຈເປັນ ຢ່າງຍິ່ງ ທີ່ໄດ້ສຳເລັດການຄົ້ນຄວ້າບົດວິທະຍານິພົນ ໃນຄັ້ງນີ້ ເຊິ່ງກ່ອນທີ່ທຸກຢ່າງຈະປະສົບຜົນສຳເລັດ ລົງໄດ້ດ້ວຍດີ ແມ່ນຍ້ອນການໃຫ້ຄວາມຮ່ວມມື ຈາກບັນດາອົງການຈັດຕັ້ງທີ່ກ່ຽວຂ້ອງໃນການຕອບ ສະໜອງດ້ານຂໍ້ມູນຂ່າວສານ ແລະ ໃຫ້ການຊີ້ນຳ ເປັນຢ່າງດີ ໂດຍສະເພາະແມ່ນຄະນະເສດຖະສາດ ແລະ ການຄຸ້ມຄອງ ທີ່ໄດ້ໃຫ້ໂອກາດແກ່ຂ້າພະເຈົ້າ ໃນການສຶກສາຮ່ຳຮຽນ ແລະ ທຸກພາກສ່ວນທີ່ໄດ້ ອຳນວຍຄວາມສະດວກໃນການຕອບສະໜອງຂໍ້ມູນ ຂ່າວສານໃຫ້ແກ່ຂ້າພະເຈົ້າ.

ກ່ອນອື່ນໝົດຂໍສະແດງຄວາມຂອບໃຈຢ່າງ ຍິ່ງມາຍັງ ທ່ານ ປອ ແສງສຸລິຍາ ຈັນທະນາຄອນ ທີ່ ເປັນອາຈານທີ່ປຶກສາ ພ້ອມດ້ວຍ ປທ ອຸດຕະຄອນ ສິງທອງ ແລະ ປທ ທະນູສິນ ພະໄຊສິດທິເດດ ທີ່ ເປັນອາຈານຜູ້ຊ່ວຍ ໄດ້ໃຫ້ການຊີ້ນຳນຳພາໃນການ ຂຽນບົດວິທະຍານິພົນ ໃນຄັ້ງນີ້ ແລະ ທີ່ລືມບໍ່ໄດ້ກໍ່ ຄືອາຈານທຸກທ່ານທີ່ໃຫ້ກຽດເປັນກຳມະການໃນ ການປ້ອງກັນບົດວິທະຍານິພົນ ເຊິ່ງທຸກໆທ່ານໄດ້ ສະຫຼະເວລາ, ເຫື່ອແຮງ ແລະ ສະຕິປັນຍາຂອງທ່ານ ເຂົ້າຮ່ວມໃນການແນະນຳ ແລະ ໃຫ້ຄຳຄິດຄຳເຫັນ ເພື່ອຊ່ວຍໃນການແກ້ໄຂບັນຫາທີ່ຍັງຄົງຄ້າງ ແລະ ຂໍ້ ຂາດຕົກບົກຜ່ອງບາງປະການ. ນອກຈາກນີ້

ຂ້າພະເຈົ້າຂໍສະແດງຄວາມຂອບໃຈມາຍັງ ພະນັກງານຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງໂຂງ ແຂວງຈຳປາສັກ, ນາຍບ້ານບ້ານຄອນ ແລະ ບ້ານດອນເດດ ເມືອງໂຂງ ແຂວງຈຳປາສັກ ພ້ອມທັງພໍ່ແມ່ປະຊາຊົນທຸກທ່ານທີ່ ໄດ້ເສຍສະຫຼະເວລາອັນມີຄຸນຄ່າໃນການຕອບແບບ ສອບຖາມຄັ້ງນີ້ ຈົນສຳເລັດ ເຮັດໃຫ້ຂ້າພະເຈົ້າມີຂໍ້ ມູນພຽງພໍທີ່ນຳມາໃຊ້ໃນການສຶກສາຄັ້ງນີ້.

ພິເສດຂ້າພະເຈົ້າ ຂໍສະແດງຄວາມຮູ້ບຸນຄຸນ ມາຍັງຄອບຄົວຂອງຂ້າພະເຈົ້າເອງ ໂດຍສະເພາະ ແມ່ນພໍ່ແມ່ ແລະ ພັນລະຍາ ທີ່ໃຫ້ການອຸ້ມຊູ ຊ່ວຍເຫຼືອທາງດ້ານທຶນຮອນ ແລະ ເປັນກຳລັງໃຈ ໃຫ້ຂ້າພະເຈົ້າໃນການສຶກສາຮ່ຳຮຽນຕະຫຼອດມາ ແລະ ຂອບໃຈໝູ່ເພື່ອນໝົດທຸກຄົນທີ່ຊ່ວຍເຫຼືອ ແລະ ແລກປ່ຽນຄຳຄິດຄຳເຫັນໃນເວລາທີ່ສຶກສາ ຮ່ຳຮຽນຢູ່ທີ່ຄະນະເສດຖະສາດ ແລະ ການຄຸ້ມຄອງ.

ສຸດທ້າຍນີ້ ຂ້າພະເຈົ້າຂໍອວຍພອນໄຊອັນ ປະເສີດມາຍັງທຸກໆທ່ານ ທີ່ໄດ້ໃຫ້ການຮ່ວມມື ແລະ ຊ່ວຍເຫຼືອຂ້າພະເຈົ້າທຸກປະການ, ຂໍໃຫ້ທຸກ ທ່ານມີຄວາມສຸກ ແລະ ປະສົບຜົນສຳເລັດໃນທຸກ ໜ້າທີ່ວຽກງານດ້ວຍ.

## 8. ເອກະສານອ້າງອີງ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ. (2016). ວິໄສທັດ 2023, ຍຸດທະສາດຮອດປີ 2025. ນະຄອນຫຼວງວຽງຈັນ.

ແຂວງຈຳປາສັກ. (2020). ແຜນພັດທະນາເສດຖະກິດ-ສັງ ຄົມ 5 ປີຄັ້ງທີ 9 ແຂວງຈຳປາສັກ.

ພອນແກ້ວ. (2010). ເມືອງໂຂງໃນອະດີດ ແລະ ປະຈຸບັນ. ເມືອງໂຂງ: ໂຄງການພັດທະນາການທ່ອງທ່ຽວແບບຍືນຍົງ, ພິມທີ່ໂຮງພິມສີສະຫວາດ, ISBN 978-9932-06-005-9

ອຸລາ. (2020). ແຜນພັດທະນາ, ສົ່ງເສີມ ແລະ ຄຸ້ມຄອງຈຸດໝາຍປາຍທາງການທ່ອງທ່ຽວພາກໃຕ້ ຂອງ ສປປ ລາວ ສຳລັບປີ 2020-2025. ນະຄອນຫຼວງວຽງຈັນ

Cohen, J.M. and Uphoff, N.T. (1981). Rural Development Participation: Concept and Measures for Project Design Implementation and Evaluation. Rural Development Committee Center for International Studies. Cornell University.

United Nations. (1981). Popular Participation in Decision Making for Development. New York: United Nation Publication.

Taro Yamane. (1973). Statistics: an introductory anal ysis. New York: New York: Harper & Row.